**EMPLOYMENT DEVELOPMENT DEPARTMENT**
**PO BOX 2530**
**RANCHO CORDOVA, CA 95741-2530**

**EDD ເບີໂທບໍ່ເສຍຄ່າ: 1-866-401-2849**

# ເອກະສານທີ່ຮັບໄດ້ສໍາລັບການກວດສອບການລະບຸຕົວ

**(ສິ່ງສະບັບສໍາເນົາ ນອກຈາກວ່າໄດ້ບອກເປັນຢ່າງອື່ນ)**

ທ່ານຕ້ອງໃຫ້ເອກະສານ  ຈາກກຸ່ມ **"ການລະບຸຕົວດ້ວຍຮູບ"** ***<u>ແລະ</u>*** ຢ່າງໜ້ອຍເອກະສານ**ສະບັບໜຶ່ງ** ຈາກກຸ່ມ **"ເອກະສານຫຼັກຖານລະບຸຕົວອື່ນໆ"**. ທຸກເອກະສານທີ່ສົ່ງໃຫ້ຈະຖືກກ໊ອບປີ້ໄປໃສ່ **ເຈ້ຍຂະໜາດ 8 ½ x 11 ນີ້ວ** ແລະຕ້ອງເອົາໝາຍເລກປະກັນສັງຄົມ (SSN) ຂອງທ່ານໃສ່ໄວ້ໃນແຕ່ລະໜ້ານໍາ.

## ການລະບຸຕົວດ້ວຍຮູບ

ກະລຸນາໃຫ້ <u>ສໍາເນົາ</u> ຂອງ **ໜຶ່ງ** ໃນເອກະສານຕໍ່ໄປນີ້ເປັນສະບັບທີ່ແຈ້ງແລະອ່ານໄດ້ ຊຶ່ງໜ່ວຍງານຂອງລັດ ທ້ອງຖິ່ນ ຫຼື ລັດຖະບານກາງອອກໃຫ້ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ:

- ໃບອະນຸຍາດຂັບຂີ່ ຫຼື ບັດປະຈໍາຕົວ (ID)
- ໜັງສືຜ່ານແດນໃນສະຫະລັດ **ຫຼື** ບັດຜ່ານແດນ
- ໜັງສືຜ່ານແດນຂອງຕ່າງປະເທດ
- ບັດທະຫານຂອງສະຫະລັດ (ດ້ານໜ້າແລະດ້ານຫຼັງ).
- ບັດປະຈໍາຕົວ (ID) ຂອງຜູ້ຂຶ້ນກັບທະຫານ (ດ້ານໜ້າແລະດ້ານຫຼັງ)
- ເອກະສານອະນຸຍາດໃຫ້ເຮັດວຽກຊຶ່ງອອກໃຫ້ໂດຍໜ່ວຍງານພົນລະເມືອງ ແລະການເຂົ້າເມືອງຂອງສະຫະລັດ (USCIS) *(USCIS ແບບຟອມ I-766)*
- ໃບຢັ້ງຢືນສັນຊາດ *(SCIS ແບບຟອມ N-600)*
- ໃບຢັ້ງຢືນການປ່ຽນສັນຊາດ *(USCIS ແບບຟອມ N-550)*
- ບັດລົງທະບຽນທີ່ຢູ່ຖາວອນ ຫຼື ບັດລົງທະບຽນຄົນຕ່າງດ້າວ *(USCIS ແບບຟອມ I-551)*

## ເອກະສານຫຼັກຖານລະບຸຕົວອື່ນໆ

ກະລຸນາໃຫ້ **ໜຶ່ງ** ໃນເອກະສານຕໍ່ໄປນີ້ເປັນສະບັບສໍາເນົາ ຫຼືສະບັບຕົ້ນທີ່ແຈ້ງແລະອ່ານໄດ້:

### ຂໍ້ມູນການຈ້າງງານ

- ສໍາເນົາຂອງໃບ W-2 ຢ່າງໜ້ອຍໃບໜຶ່ງທີ່ອອກໃຫ້ກັບທ່ານສໍາລັບປີທີ່ຜ່ານມາ; **ຫຼື**
- ສໍາເນົາສົ້ນໃບເຊັກຈ່າຍເງິນຢ່າງໜ້ອຍໜຶ່ງໃບ ຫຼືໃບຢັ້ງຢືນການຈ່າຍເງິນທີ່ນາຍຈ້າງຂອງທ່ານອອກໃຫ້ທ່ານ ພາຍໃນສິບສອງເດືອນກ່ອນວັນທີ່ໄດ້ຍື່ນການຮ້ອງຮຽນຂອງທ່ານເປັນເທື່ອທໍາອິດ ແລະຮວມມີຂໍ້ມູນຕໍ່ໄປນີ້:
    - o ຊື່ (ຫຼືຕົວອັກສອນຫຍໍ້) ແລະນາມສະກຸນຂອງທ່ານ, **ແລະ** SSN (ຢ່າງໜ້ອຍ 4 ຕົວເລກສຸດທ້າຍ) ຫຼືເລກປະຈໍາຕົວລູກຈ້າງຂອງທ່ານ, **ແລະ** ຊື່ຂອງນາຍຈ້າງຂອງທ່ານ, **ແລະ** ວັນທີ່ຂອງໄລຍະເວລາທີ່ຈ່າຍເງິນ, ຫຼືວັນທີ່ອອກສົ້ນໃບເຊັກ ຫຼືວັນທີ່ອອກໃບຢັ້ງຢືນການຈ່າຍເງິນ.

**ຫຼື**

**ການກວດສອບທີ່ຢູ່** (ທີ່ສະແດງ **ຊື່** ແລະທີ່ຢູ່**ບ່ອນຢູ່** ປັດຈຸບັນຂອງທ່ານ)

- ສໍາເນົາໃບບິນການນໍາໃຊ້ສາທາລະນູປະໂພກທີ່ບໍ່ໄດ້ປ່ຽນແປງ (ໄຟຟ້າ, ແກັສ, ຂີ້ເຫຍື້ອ, ນໍ້າ, ຫຼືນໍ້າເສຍ), ໃບບິນເຄເບີລ TV, ໃບບິນໂທລະສັບ, ໃບຢັ້ງຢືນບັນຊີທະນາຄານ, ໃບບິນອາກອນທີ່ດິນແລະຊັບສິນ, ໃບຢັ້ງຢືນການຈໍານອງບ້ານ ຫຼືສັນຍາເຊົ່າ/ໃຫ້ເຊົ່າທີ່ຢູ່ອາໄສທີ່ເປັນປັດຈຸບັນແລະສົມບູນ, **ຫຼື**
- ສໍາເນົາໃບຢັ້ງຢືນການລົງທະບຽນໃນຖານະຜູ້ເຊົ່າ/ຜູ້ໃຊ້ທີ່ຮັບອະນຸຍາດຂອງຕູ້ໄປສະນີ ຫຼື ຕູ້ໄປສະນີສ່ວນຕົວ.

**ຫຼື**

**ການກວດສອບໝາຍເລກປະກັນສັງຄົມ** *(ໃຊ້ບັດປະກັນສັງຄົມຈະບໍ່ຕອບສະໜອງຂໍ້ກໍານົດນີ້).*

- ສໍາເນົາສົມບູນ (ໜ້າ 1, 2, ແລະ 3) ຂອງ ***ໃບຢັ້ງຢືນການປະກັນສັງຄົມ*** ຂອງທ່ານເຊິ່ງເອົາໄດ້ທີ່ **socialsecurity.gov/myaccount**, **ຫຼື**
- ໃບແຈ້ງບຸກຄົນທີ່ສາມວ່າມີການກໍານົດໝາຍເລກປະກັນສັງຄົມສະບັບຕົ້ນ (*SSA ແບບຟອມ 7028*); **ຫຼື**
- ໃບລາຍງານຜົນປະໂຫຍດທາງປະກັນສັງຄົມທີ່ໄດ້ຮັບສະບັບຕົ້ນ (*SSA Form 2458*).

**ຫຼື**

### ການກວດສອບວັນເດືອນປີເກີດ

- ສໍາເນາໃບຢັ້ງຢືນເກີດທາງການ ທີ່ທາງໜ່ວຍງານທ້ອງຖິ່ນ, ລັດ, ຫຼື ລັດຖະບານກາງ, ຫຼືລັດຖະບານຕ່າງປະເທດອອກໃຫ້, ຫຼືການຢັ້ງຢືນການເກີດອື່ນທີ່ເປັນທາງການ. ໃບຢັ້ງຢືນເກີດທີ່ໝາຍໄວ້ວ່າ "ເປັນຂໍ້ມູນ, ບໍ່ແມ່ນເອກະສານທີ່ນໍາໃຊ້ໄດ້ ເພື່ອເຮັດການລະບຸຕົວຕົນ," ບໍ່ແມ່ນການກວດສອບທີ່ຍອມຮັບໄດ້. ຄໍາແປທີ່ເປັນທາງການຂອງໃບຢັ້ງຢືນເກີດຢ່າງດຽວບໍ່ແມ່ນການກວດສອບທີ່ຍອມຮັບໄດ້. ຕ້ອງຄັດຕິດໃບຢັ້ງຢືນເກີດທາງການມາພ້ອມຄໍາແປທາງການ.